ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ
ຫ້ອງການກະຊວງ

ເລກທີ: 1573/ຫກງ
ນະຄອນຫຼວງວຽງຈັນ, ວັນທີ: 05 ສິງຫາ 2020

# ແຈ້ງການ

ເຖິງ: ກົມພາສີ, ກອງຄຸ້ມຄອງພາສີ V, ດ່ານພາສີສາກົນຂົວມິດຕະພາບ 1, ລັດວິສາຫະກິດບໍລິການສິນຄ້າຜ່ານແດນ, ທະນາຄານການຄ້າຕ່າງປະເທດລາວມະຫາຊົນ, ທະນາຄານພັດທະນາລາວ, ບັນດາບໍລິສັດນຳເຂົ້າສິນຄ້າປະເພດທົ່ວໄປ ແລະ ນ້ຳມັນເຊື້ອໄຟ.

ເລື່ອງ: ການນຳໃຊ້ລະບົບແຈ້ງພາສີປະຕູດຽວແຫ່ງຊາດ (Lao National Single Window) ເຂົ້າສູ່ການຄຸ້ມຄອງການນຳເຂົ້າສິນຄ້າປະເພດທົ່ວໄປ ແລະ ນ້ຳມັນເຊື້ອໄຟ ຢູ່ດ່ານພາສີສາກົນຂົວມິດຕະພາບ 1.

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ, ສະບັບເລກທີ 5050/ກງ, ລົງວັນທີ 24 ທັນວາ 2019, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງການເງິນ;
- ອີງຕາມ ບົດແນະນຳຂອງກະຊວງການເງິນ, ສະບັບເລກທີ 4217/ກງ, ລົງວັນທີ 28 ທັນວາ 2018, ວ່າດ້ວຍການນຳໃຊ້ລະບົບແຈ້ງພາສີປະຕູດຽວແຫ່ງຊາດ;
- ອີງຕາມ ຂໍ້ຕົກລົງຂອງກະຊວງການເງິນ, ສະບັບເລກທີ 0204/ກງ, ລົງວັນທີ 15 ມັງກອນ 2019, ວ່າດ້ວຍການອະນຸມັດນຳໃຊ້ລະບົບແຈ້ງພາສີປະຕູດຽວແຫ່ງຊາດ;
- ອີງຕາມ ການເຫັນດີຂອງຄະນະນຳກະຊວງການເງິນ, ຄັ້ງວັນທີ 03 ສິງຫາ 2020 ຕໍ່ກັບໜັງສືລາຍງານຂອງກົມພາສີ ສະບັບເລກທີ 03411/ກພສ, ລົງວັນທີ 29 ກໍລະກົດ 2020.

## ຫົວໜ້າຫ້ອງການກະຊວງ ແຈ້ງການ:

1. ໃຫ້ຈັດຕັ້ງປະຕິບັດລະບົບແຈ້ງພາສີປະຕູດຽວແຫ່ງຊາດ (Lao National Single Window "LNSW") ເຂົ້າໃນການຄຸ້ມ ຄອງການນຳເຂົ້າ ສິນຄ້າປະເພດທົ່ວໄປ ແລະ ນ້ຳມັນເຊື້ອໄຟ; ໂດຍໃຫ້ນຳໃຊ້ລະບົບດັ່ງກ່າວເຂົ້າໃນການຄຸ້ມຄອງຢູ່ດ່ານພາສີສາກົນຂົວມິດຕະພາບ 1. ພາຍຫລັງມີການສຳເລັດການຈັດຕັ້ງປະຕິບັດແລ້ວ ຈຶ່ງໃຫ້ສືບຕໍ່ຜັນຂະຫຍາຍການນຳໃຊ້ລະບົບໄປສູ່ບັນດາດ່ານພາສີສາກົນ ໃນຂອບເຂດທົ່ວປະເທດ.
2. ໃຫ້ບັນດາຜູ້ປະກອບການນຳເຂົ້າ ສິນຄ້າປະເພດທົ່ວໄປ ແລະ ນ້ຳມັນເຊື້ອໄຟ ຊຳລະຄ່າພາສີ, ອາກອນ ແລະ ພັນທະອື່ນໆ ພ້ອມທັງຄ່າທຳນຽມ, ຄ່າບໍລິການຕ່າງໆ ຂອງຂະແໜງການກ່ຽວຂ້ອງ ແບບລວມເສູນ ຜ່ານໜ່ວຍບໍລິການ ຫຼືລະບົບເອເລັກໂຕຣນິກ ຂອງທະນາຄານການຄ້າຕ່າງປະເທດລາວມະຫາຊົນ ແລະ ທະນາຄານພັດທະນາລາວ ເຊັ່ນ: ລະບົບ Smart Tax, i-Banking, BCEL One, LDB Trust, LDB Corportate Banking, ເງິນສົດ, ເງິນໂອນ ແລະ ເງິນແຊັກ ຕາມລະບຽບການທີ່ກ່ຽວຂ້ອງ.
3. ໃຫ້ບໍລິສັດຮ່ວມພັດທະນາລະບົບແຈ້ງພາສີປະຕູດຽວແຫ່ງຊາດ ຈັດເກັບຄ່າບໍລິການນຳໃຊ້ລະບົບດັ່ງກ່າວ ໃນອັດຕາ 120,000 (ໜຶ່ງແສນຊາວພັນ) ກີບ ຕໍ່ການແຈ້ງນຳເຂົ້າສິນຄ້າ 1 ຄັ້ງ ຕາມທີ່ກຳນົດໄວ້ໃນສັນຍາສຳປະທານໂຄງການ ຊຶ່ງບໍ່ລວມເອົາຄ່າພາສີ, ຄ່າອາກອນ, ຄ່າທຳນຽມ ແລະ ຄ່າບໍລິການຂອງຂະແໜງການທີ່ກ່ຽວຂ້ອງ.
4. ການຈັດຕັ້ງປະຕິບັດໃນໄລຍະທຳອິດ ເລີ່ມແຕ່ວັນທີ່ 10 ສິງຫາ 2020 ເປັນຕົ້ນໄປ ໂດຍກຳນົດເອົາບໍລິສັດເປົ້າໝາຍຈຳນວນ 40 ບໍລິສັດ ທີ່ໄດ້ຜ່ານການລົງທະບຽນ ແລະ ຜ່ານການຝຶກອົບຮົມແລ້ວ (ລາຍລະອຽດມີບັນຊີລາຍຊື່ບໍລິສັດຄັດຕິດມາພ້ອມນີ້) ເພື່ອເລີ່ມນຳໃຊ້ລະບົບຕົວຈິງ ໃນໄລຍະໃດໜຶ່ງ.

5. ສຳລັບຜູ້ປະກອບການ ທີ່ບໍ່ທັນໄດ້ລົງທະບຽນນຳໃຊ້ລະບົບແຈ້ງພາສີປະຕູດຽວແຫ່ງຊາດ ແມ່ນໃຫ້ຊຸ້ນຊ້ຽວດຳເນີນຂັ້ນຕອນການລົງທະບຽນ, ອອກລະຫັດຜູ້ນຳໃຊ້ ກ່ອນວັນທີ 14 ກັນຍາ 2020. ຈາກນັ້ນນັບແຕ່ວັນທີ 14 ກັນຍາ 2020 ເປັນຕົ້ນໄປ ທຸກການນຳເຂົ້າສິນຄ້າທົ່ວໄປ ແລະ ນ້ຳມັນເຊື້ອໄຟ ຜ່ານດ່ານພາສີສາກົນຂົວມິດຕະພາບ 1, ຕ້ອງດຳເນີນການແຈ້ງພາສີເປັນລາຍ ລະອຽດ ຜ່ານລະບົບແຈ້ງພາສີປະຕູດຽວແຫ່ງຊາດ ທັງໝົດ.
6. ມອບໃຫ້ກົມພາສີ, ກອງຄຸ້ມຄອງພາສີ V, ດ່ານພາສີສາກົນຂົວມິດຕະພາບ 1, ລັດວິສາຫະກິດບໍລິການສິນຄ້າຜ່ານແດນ, ທະນາຄານການຄ້າຕ່າງປະເທດລາວມະຫາຊົນ, ທະນາຄານພັດທະນາລາວ, ບັນດາບໍລິສັດນຳເຂົ້າສິນຄ້າປະເພດ ທົ່ວໄປ ແລະ ນ້ຳມັນເຊື້ອໄຟ, ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດ ນຳໃຊ້ລະບົບແຈ້ງ ພາສີປະຕູດຽວແຫ່ງຊາດ ໃຫ້ສຳເລັດຕາມລະດັບຄາດໝາຍ.
7. ໃນການຈັດຕັ້ງປະຕິບັດຕົວຈິງຖ້າພົບຂໍ້ຫຍຸ້ງຍາກ ໃຫ້ລາຍງານກົມພາສີ, ເພື່ອມີວິທີການແກ້ໄຂໃຫ້ທັນສະພາບການ.

ແຈ້ງການສະບັບນີ້, ມີຜົນສັກສິດນຳໃຊ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າຫ້ອງການກະຊວງ**

ສົມບູນ ອິນທະປັດຖາ

**ຕິດຕໍ່ພົວພັນ**

ທ່ານ ຄຳປຸນ ອິນແປງລາດຊະບຸດ, ໂທ 020 5944 1818

ທ່ານ ອານຸສັກ ສີສະອາດ, ໂທ 020 2320 0999

# ລາຍຊື່ບໍລິສັດ ທີ່ຈະນຳໃຊ້ລະບົບ LNSW

| ລຳດັບ | ລາຍຊື່ບໍລິສັດ |
|---|---|
| 1 | ບໍລິສັດ ເອັກຊິມ ຈຳກັດ |
| 2 | ລັດວິສາຫະກິດ ລາວບໍລິການສິນຄ້າຜ່ານແດນ |
| 3 | ບໍລິສັດ ສະກາວີ-ລາວ ຈຳກັດ |
| 4 | ບໍລິສັດ ໂຮຢາລາວ ຈຳກັດ |
| 5 | ບໍລິສັດ ສຸວັນນີໂຮມເຊັນເຕີມະຫາຊົນ |
| 6 | ບໍລິສັດ ພີເຄອິນເຕີເຟຣດ(ລາວ)ຈຳກັດ |
| 7 | ບໍລິສັດ ລັດວິສາຫະກິດ ໄຟຟ້າລາວ |
| 8 | ບໍລິສັດ ດີເຄເອັກສ໌ເຮັດສ໌ ລາວ ຈຳກັດ |
| 9 | ບໍລິສັດ ພູສະຫວັນ ຊິບປິ້ງ ຈຳກັດຜູ້ດຽວ |
| 10 | ບໍລິສັດ ໂອແອນເຄ ທີ່ປຶກສາແລະບໍລິການ |
| 11 | ບໍລິສັດ ຊີເອສຊີ ນະຄອນຫລວງວຽງຈັນຈຳກັດຜູ້ |
| 12 | ບໍລິສັດ ເອັດແອວ ຂາອອກ-ຂາເຂົ້າ ຈຳກັດ |
| 13 | ບໍລິສັດ ເບຍລາວຈຳກັດ |
| 14 | ບໍລິສັດ ໄຊເສດຖາການຄ້າ ຂ-ຂ ຈຳກັດຜູ້ດຽວ |
| 15 | ບໍລິສັດ ລັດວິສາຫະກິດ ໄຟຟ້າລາວ |
| 16 | ບໍລິສັດ ອາລີນ ພັດທະນາການຄ້າ ຂາອອກ-ຂາເຂົ້ |
| 17 | ບໍລິສັດ ຊີເອດສ ທານສະປອດ ຈຳກັດຜູ້ດຽວ |
| 18 | ບໍລິສັດ ລາວ-ຊີຊິນຈຳກັດ |
| 19 | ບໍລິສັດ ດີບວູ ຈຳກັດ |
| 20 | ບໍລິສັດ ວຽງຈັນເອັສວີການຄ້າແລະບໍລິການຂ-ຂ |
| 21 | ບໍລິສັດ ແອວເອສ໌ການຄ້າຂາອອກ-ຂາເຂົ້າ ຈຳກັດ |
| 22 | ບໍລິສັດ ຂວັນໃຈການຄ້າ ຂອ-ຂຂ ຈຳກັດ |
| 23 | ບໍລິສັດ ເບທາໂກ (ລາວ) ຈຳກັດຜູ້ດຽວ |
| 24 | ບໍລິສັດ ວຽງທອງການຢາຂາອອກ-ຂາເຂົ້າ |
| 25 | ບໍລິສັດ ຕັດຫຍິບ ຫວຽດທູ ຈຳກັດຜູ້ດຽວ |
| 26 | ບໍລິສັດ ເອັມເອັມຊີ ເອເລັກໂຕຣນິກລາວຈຳກັດ |
| 27 | ບໍລິສັດ ລານທຽນ ຈຳກັດ |

| | |
|---|---|
| 28 | ບໍລິສັດ ຮ່ວມພັດທະນາກະສິກຳຂາອອກ - ຂາເຂົ້າ |
| 29 | ບໍລິສັດ ເອັນທີພີ ການຄ້ານ້ຳມັນເຊື້ອໄຟ |
| 30 | ບໍລິສັດ ດີແອວ ຈະເລີນຊັບ ອຸດສາຫະກຳ ການຄ້າ |
| 31 | ບໍລິສັດ ຮ່ວມທຶນພັດທະນາທາງດ່ວນ ລາວ-ຈີນ |
| 32 | ບໍລິສັດ ນະຄອນຫລວງ ອຸດສາຫະກຳເຫລັກ ຈຳກັດ |
| 33 | ບໍລິສັດ ຊີພີລາວ ຈຳກັດ |
| 34 | ບໍລິສັດ ເບທາໂກ (ລາວ) ຈຳກັດຜູ້ດຽວ |
| 35 | ບໍລິສັດ ຄວາມຫວັງໃຫ່ມລາວ ຈຳກັດ |
| 36 | ໂຮງງານ ນ້ຳມັນພຶດແສງສະຫວ່າງ ຈຳກັດ |
| 38 | ບໍລິສັດ ພີພີ ຂາອອກ-ຂາເຂົ້າ ຈຳກັດຜູ້ດຽວ |
| 39 | ບໍລິສັດ ຢູນີລີເວີ ເຊີວິດສ໌ (ລາວ) ຈຳກັດ |
| 40 | ບໍລິສັດ ໄຊມັງກອນ ຈຳກັດ |